
ຊຶມເຊີຍຜົນສຳເລັດ


BCEL ເປີດໂຕການນຳໃຊ້ລະບົບໂປຼແກຼມ HBS (Core Banking ໃໝ່) ຄັ້ງທຳອິດໃນ ສປປ ລາວ ຢ່າງເປັນທາງການ



ຄັ້ງທຳອິດໃນ ສປປ ລາວ ທີ່ນຳໃຊ້ລະບົບໂປຼແກຼມ Core Banking HBS ເຂົ້າຮັບໃຊ້ວຽກງານ ການເງິນ-ການທະນາຄານໂດຍ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL), ເຊິ່ງໄດ້ຈັດພິທີການເປີດໂຕຢ່າງເປັນທາງການ ໃນຕອນເຊົ້າຂອງ ວັນສຸກ ວັນທີ 06 ສິງຫາ 2021 ທີ່ ອາຄານ ທຄຕລ ສຳນັກງານໃຫຍ່ ໂດຍພິທີດັ່ງກ່າວ ໄດ້ຈັດຜ່ານທາງລະບົບອອນລາຍ ໂປຼແກຼມ ZOOM, ເປັນກຽດເຂົ້າຮ່ວມໂດຍ ທ່ານ Terry LIANG ປະທານຜູ້ບໍລິຫານ ບໍລິສັດ ໄຮຊັນ ຟິນເທັກ ໂກຼບ (HSG) ແລະ ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ BCEL, ພ້ອມດ້ວຍແຂກຈາກ ທະນາຄານແຫ່ງ ສປປ ລາວ ກົມໄອທີ ແລະ ກົມຄຸ້ມຄອງທະນາຄານທຸລະກິດ, ທ່ານ Winman KWOK Waikwan- Project Director ບໍລິສັດ ໄຮຊັນ ຟິນເທັກ ໂກຼບ (HSG) ແລະ ພາກສ່ວນທີ່ກ່ຽວຂ້ອງ ຂອງທັງສອງຝ່າຍກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ;

ຜົນສຳເລັດດັ່ງກ່າວເປັນໝາກຜົນຂອງການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL) ແລະ ບໍລິສັດ ໄຮຊັນ ຟິນເທັກ ໂກຼບ (HSG), ໂດຍທັງສອງຝ່າຍໄດ້ເລີ່ມດຳເນີນ ຢ່າງເປັນທາງການໃນໄລຍະທ້າຍປີ 2019 ເປັນຕົ້ນມາ, ໃນໄລຍະທີ່ຜ່ານມາທັງສອງຝ່າຍກໍໄດ້ສຸມໃສ່ຄົ້ນຄວ້າພັດທະນາຢ່າງຕັ້ງໜ້າເພື່ອໃຫ້ລະບົບມີຄວາມສົມບູນ ແລະ ສອດຄ່ອງກັບການນຳໃຊ້ຕົວຈິງທີ່ສຸດ ຈົນມາຮອດທ້າຍເດືອນ ເມສາ 2021 ເຫັນວ່າລະບົບມີ

ຄວາມພ້ອມແລ້ວ ທຄຕລ ຈຶ່ງໄດ້ເລີ່ມນຳໃຊ້ລະບົບໂປຼແກຼມ Core Banking HBS ຢ່າງເປັນທາງການ (Go-Live ລະບົບ), ປະຈຸບັນ ລະບົບໂປຼແກຼມ Core Banking HBS ແມ່ນມີຄວາມພ້ອມໃນການນຳໃຊ້ ແລະ ສາມາດຮອງຮັບຄວາມຕ້ອງການຂອງການບໍລິການໄດ້ຫຼາກຫຼາຍ ເຊິ່ງແທດເໝາະກັບຍຸກປະຈຸບັນທີ່ມີຄວາມທັນສະໄໝໃນຮູບແບບການບໍລິການທາງດ້ານການເງິນ (FinTech);



ລະບົບໂປຼແກຼມ Core Banking HBS ເປັນລະບົບໃໝ່ ທີ່ມີຄວາມທັນສະໄໝໃນການນຳໃຊ້ ສາມາດຮອງຮັບໄດ້ຫຼາກຫຼາຍຜະລິດຕະພັນ, ມີຄວາມປອດໄພ ແລະ ມີປະສິດທິພາບສູງ ໄດ້ມາດຕະຖານສາກົນ. ນອກຈາກນັ້ນ, ລະບົບດັ່ງກ່າວແມ່ນຈະຊ່ວຍສະໜັບສະໜຸນໃຫ້ ທຄຕລ ຫັນເປັນ Digital Banking ຢ່າງເຕັມຮູບແບບເພື່ອນຳມາເຊິ່ງແນວຄິດດ້ານນະວັດຕະກຳທາງການເງິນທີ່ຊ່ວຍສ້າງຜະລິດຕະພັນ ແລະ ການບໍລິການ ໃຫ້ຕອບໂຈດຄວາມຕ້ອງການຂອງລູກຄ້າໃນການໃຊ້ຊີວິດປະຈຳວັນ ແລະ ມອບປະສົບການທີ່ດີໃຫ້ກັບລູກຄ້າທີ່ເໜືອຄວາມຄາດໝາຍ ດ້ວຍຊ່ອງທາງດີຈີຕອລທີ່ລ້ຳສະໄໝ ພາຍໃຕ້ຄຳຂວັນ “ທັນສະໄໝ ວ່ອງໄວ ໝັ້ນໃຈ” ເຊິ່ງຖືເປັນໜຶ່ງໃນຍຸດທະສາດ ຂອງ BCEL ຄື: "ຍຸດທະສາດຫັນເປັນທັນສະໄໝໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດກ້າວສູ່ຍຸກເສດຖະກິດດີຈີຕອລ;

“ໃນການປ່ຽນຖ່າຍລະບົບໂປຼແກຼມ HBS (Core Banking ໃໝ່) ໃນຄັ້ງນີ້, ຂ້າພະເຈົ້າເຊື່ອໝັ້ນວ່າ BCEL ພວກເຮົາພ້ອມດ້ວຍພື້ນຖານອັນເຂັ້ມແຂງຈະສາມາດຂັບເຄື່ອນເພີ່ມການຂະຫຍາຍຜະລິດຕະພັນໃໝ່ ແລະ ການບໍລິການ ຮູບແບບໃໝ່ທີ່ຕອບສະໜອງຄວາມຕ້ອງການຂອງສັງຄົມໃນປະຈຸບັນກໍຄືອະນາຄົດ. ພວກເຮົາເຊື່ອໝັ້ນໃນສະກາຍຍະພາບຂອງລະບົບ ໂປຼແກຼມ Core Banking HBS ແມ່ນສາມາດເພີ່ມມູນຄ່າໃຫ້ກັບຜະລິດຕະພັນເອເລັກໂຫນິກແບ້ງຄິງນັ້ນກໍ່ຄື ການບໍລິການເທິງມືຖື ຫຼື BECL ONE ຂອງພວກເຮົາທີ່ມີຄວາມເໜືອກວ່າທາງດ້ານການແຂ່ງຂັນໃນຕະຫຼາດປະຈຸບັນ” ກ່າວໂດຍ ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ BCEL.

“ພວກເຮົາພ້ອມແລ້ວທີ່ຈະໃຫ້ການສະໜັບສະໜຸນການບໍລິການແກ່ທາງ ທຄຕລ ເຊິ່ງມັນເປັນຂີດໝາຍໃນການເປັນຄູ່ຮ່ວມໃນໄລຍະຍາວ ແລະ ເຊື່ອໝັ້ນວ່າ ລະບົບທີ່ທາງພວກເຮົາສະໜອງໃຫ້ນັ້ນ ເປັນລະບົບທີ່ທັນສະໄໝທີ່ສຸດ ແລະ ສ່ອງຄ່ອງກັບສະພາບການປ່ຽນແປງທາງດ້ານການເງິນໃນຍຸກສະໄໝ Digital ນີ້ຫຼາຍທີ່ສຸດ” ກ່າວໂດຍ ທ່ານ Terry LIANG ປະທານຜູ້ບໍລິຫານ ບໍລິສັດ ໄຮຊັນ ຟິນເທັກ ໂກຼບ (HSG).

ໃນຕໍ່ໜ້າ ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການ ລວມໄປເຖິງຜະລິດຕະພັນຕ່າງໆ ຢ່າງບໍ່ຢຸດຢັ້ງເພື່ອໃຫ້ແທດເໝາະກັບຄວາມຕ້ອງການຂອງລູກຄ້າຜູ້ໃຊ້ບໍລິການ ໂດຍທຸກຜະລິດຕະພັນ ແລະ ການບໍລິການແມ່ນເນັ້ນໃສ່ຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ສາມາດກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອຕອບສະໜອງຄວາມຕ້ອງການລູກຄ້າບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມກໍຄືລູກຄ້າຜູ້ທີ່ໃຊ້ບໍລິການ ທຄຕລ.